ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 794/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 ຕຸລາ 2022

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາເຄື່ອງໝາຍສັນຍາລັກ (ໃໝ່) ທະນາຄານແຫ່ງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 47/ສພຊ, ລົງວັນທີ 16 ມິຖຸນາ 2018.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 126/ຫສນຍ, ລົງວັນທີ 06 ຕຸລາ 2022.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1.** ຮັບຮອງເອົາເຄື່ອງໝາຍສັນຍາລັກໃໝ່ (Logo) ຂອງທະນາຄານແຫ່ງ ສປປ ລາວ ຮູບວົງມົນ ເບື້ອງເທິງສີຟ້າແກ່ ຂອບສີຄຳ ໂດຍຂອບມີຮູບດອກປະຈຳຍາມ ວາງປະດັບຢູ່ໃຈກາງ ແລະ ມີຕົວອັກສອນສີຟ້າແກ່ **"ທະນາຄານແຫ່ງ ສປປ ລາວ"** ແລະ **"Bank of the Lao PDR"** ໂຄ້ງເປັນວົງອ້ອມຮອບດ້ານເທິງ ແລະ ດ້ານລຸ່ມຂອງຂອບເຄື່ອງໝາຍສັນຍາລັກ ຕາມລຳດັບ. ອົງປະກອບດ້ານໃນເປັນຮູບຊ້ອນຮູບແບບສອງມິຕິ ຊຶ່ງສາມາດເບິ່ງເປັນຮູບ "ຊ້າງຄູ່ ໃຊ້ງວງຊູເງິນຮາງ 3 ແທ່ງ" ເຊິ່ງສະແດງເຖິງການຍຶດໝັ້ນເອົາສາມໜ້າທີ່ສຳຄັນຕົ້ນຕໍຂອງທະນາຄານແຫ່ງ ສປປ ລາວ ໄວ້ສູງສຸດ ແລະ ເບິ່ງໃນອີກມິຕິໜຶ່ງເປັນຮູບ "ຊ້າງຄູ່ ໂອບອຸ້ມໄຫຄຳ (ຄ້າຍຄືດົ່ນເຜົາ)" ເຊິ່ງສະແດງເຖິງໄຫທີ່ມີຊັບສິນບັດລົ້ນອອກມາ ໂດຍໃຊ້ຮູບເງິນຮາງເປັນສັນຍາລັກ.

**ມາດຕາ 2.** ເຄື່ອງໝາຍສັນຍາລັກ ທະນາຄານແຫ່ງ ສປປ ລາວ ມີຄວາມໝາຍ ດັ່ງນີ້:

- **ຂອບວົງມົນອ້ອມຮອບ** ສະແດງເຖິງຄວາມເປັນສູນກາງໃນການຄຸ້ມຄອງມະຫາພາກທາງດ້ານລະບົບການເງິນ-ເງິນຕາ ແລະ ລະບົບຊຳລະສະສາງ ຂອງປະເທດ;
- **ດອກປະຈຳຍາມ** ເປັນດອກດວງລວດລາຍລາວ ທີ່ມີຢູ່ໃນທະນະບັດເງິນກີບ ມີລັກສະນະຄ້າຍຄືດອກໄມ້ສີ່ກີບ ມີປາຍແຫຼມຊີ້ໄປສີ່ດ້ານເທົ່າກັນ;
- **ຊ້າງ** ເປັນສັດໃຫຍ່ ແລະ ສັດມຸງຄຸນປະຈຳຊາດລາວ ເປັນສັນຍາລັກຂອງຄວາມຍິ່ງໃຫຍ່, ເຂັ້ມແຂງ ແລະ ໝັ້ນຄົງ ຊຶ່ງປຽບສະເໝືອນກັບພາລະບົດບາດຂອງ ທຫລ ທີ່ເປັນທະນາຄານກາງຂອງປະເທດ ທີ່ແນໃສ່



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ເຄື່ອນໄຫວໃຫ້ເຕີບໃຫຍ່, ເຂັ້ມແຂງ ແລະ ໝັ້ນຄົງ ເພື່ອເປັນກົງຈັກຄ້ຳຊູລະບົບການເງິນ-ເງິນຕາ ແລະ ລະບົບຊໍາລະສະສາງຂອງປະເທດ;

- **ເງິນຮາງ 3 ແທ່ງ** ເປັນຊັບສົມບັດມີຄ່າຂອງຄົນລາວແຕ່ດຶກດຳບັນ ທີ່ເປັນຕົວແທນຂອງສາມທີ່ຕັ້ງພາລະບົດບາດຂອງ ທຫລ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ, ຄຸ້ມຄອງສະຖາບັນການເງິນ ແລະ ຄຸ້ມຄອງລະບົບຊໍາລະສະສາງໃຫ້ມີຄວາມໝັ້ນຄົງ, ປອດໄພ ແລະ ທັນສະໄໝ;
- **ຊ້າງຄູ່ ໃຊ້ງວງຊູເງິນຮາງຂຶ້ນໄວ້ເທິງງວງ** ສະແດງເຖິງການຮ່ວມແຮງຮ່ວມໃຈກັນຍຶດໝັ້ນເອົາສາມທີ່ຕັ້ງພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ ໄວ້ສູງສຸດ;
- **ໄຫ ຫຼື ຖົງຊັບສົມບັດ** ໃນສະໄໝດຶກດຳບັນແມ່ນຕິດພັນກັບຈຸດພິເສດ ແລະ ວິຖີຊີວິດຂອງຄົນລາວດັ້ງເດີມທີ່ມັກນຳເອົາຊັບສົມບັດມີຄ່າໃສ່ໃນໄຫຝັງດິນໄວ້ໃຫ້ປອດໄພ, ຊຶ່ງໃນໄລຍະໃໝ່ແມ່ນເກັບຮັກສາໄວ້ໃນຕູ້ເຊຟ;
- **ຊ້າງຄູ່ ໂອບອຸ້ມໄຫຄຳ ທີ່ມີຊັບສົມບັດລົ້ນອອກມາ** ໂດຍໃຊ້ເງິນຮາງເປັນສັນຍາລັກ ສະແດງເຖິງຄວາມອຸດົມສົມບູນໄປດ້ວຍຊັບສິນເງິນຄຳ ແລະ ວັດຖຸມີຄ່າຂອງປະເທດໂດຍທີ່ທະນາຄານແຫ່ງ ສປປ ລາວ ເປັນຜູ້ປົກປັກຮັກສາ ແລະ ຄຸ້ມຄອງບໍລິຫານໃຫ້ເພີ່ມພູນຄູນສ້າງຂຶ້ນ;
- **ສີຟ້າແກ່** ສະແດງເຖິງຄວາມອຸດົມສົມບູນ, ຄວາມໝັ້ນຄົງເຂັ້ມແຂງ ແລະ ການພັດທະນາ;
- **ສີຄຳ** ສະແດງເຖິງຄວາມຮັ່ງມີ ແລະ ຄວາມຮຸ່ງເຮືອງເຫຼືອງເຫຼື້ອມ;
- **ສີເງິນ** ສະແດງອອກເຖິງຄວາມທັນສະໄໝ ແລະ ສະຫງ່າງາມ.

**ມາດຕາ 3.** ການຄຸ້ມຄອງນຳໃຊ້ເຄື່ອງໝາຍ ຂອງທະນາຄານແຫ່ງ ສປປ ລາວ ມີດັ່ງນີ້:

- ເຄື່ອງໝາຍ ທະນາຄານແຫ່ງ ສປປ ລາວ ນຳໃຊ້ໃນເອກະສານທາງການທີ່ສຳຄັນຕ່າງໆ ສຳລັບຂະໜາດແມ່ນອີງຕາມຄວາມເໝາະສົມໃນການນຳໃຊ້ຕົວຈິງ;
- ເຄື່ອງໝາຍ ທະນາຄານແຫ່ງ ສປປ ລາວ ນຳໃຊ້ຕິດຢູ່ຕາມສະຖານທີ່ສຳຄັນຕ່າງໆ ສຳລັບຂະໜາດແມ່ນອີງຕາມຄວາມເໝາະສົມໃນການນຳໃຊ້ຕົວຈິງ;
- ເຄື່ອງໝາຍ ທະນາຄານແຫ່ງ ສປປ ລາວ ນຳໃຊ້ໃນສິ່ງພິມເຄື່ອງຂອງທີ່ລະນຶກຕ່າງໆ ທີ່ທາງທະນາຄານແຫ່ງ ສປປ ລາວ ຜະລິດຂຶ້ນໃນແຕ່ລະໄລຍະ.

**ມາດຕາ 4.** ມອບໃຫ້ຫ້ອງການ, ບັນດາກົມ-ທຽບເທົ່າ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 5.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ບຸນເຫຼືອ ສິນໄຊວໍຣະວົງ

# ເຄື່ອງໝາຍສັນຍາລັກໃໝ່ ທະນາຄານແຫ່ງ ສປປ ລາວ

Pantone 2748 C

Pantone 110 C

Pantone 7550 C